# ພາກທີ XII

# ການຄ້າຜ່ານທາງເອເລັກໂຕຣນິກ

## ໝວດ ກ
## ບົດບັນຍັດທົ່ວໄປ

**ມາດຕາ** 1 **ນິຍາມ (Definition)**
ຄໍາສັບທີ່ນໍາໃຊ້ໃນພາກນີ້ ມີຄວາມໝາຍ ດັ່ງນີ້:

(ກ) ສິ່ງອໍານວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີ (Computing Facilities) ໝາຍເຖິງ ເຊີບເວີຄອມພິວເຕີ ແລະ ອຸປະກອນເກັບຂໍ້ມູນ ສໍາລັບການປະມວນຜົນ ແລະ ເກັບກໍາຂໍ້ມູນ ເພື່ອນໍາໃຊ້ໃນທາງການຄ້າ.

(ຂ) ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄຸ້ມຄອງ (Covered Person) ໝາຍເຖິງ:

(1) ການລົງທຶນທີ່ໄດ້ຮັບການຄຸ້ມຄອງ (Covered Investment) ຕາມທີ່ກໍານົດໄວ້ໃນ ວັກຍ່ອຍ (a) ມາດຕາ 10.1 (ນິຍາມຄໍາສັບ);
(2) "ນັກລົງທຶນຂອງປະເທດພາຄີ" ຕາມທີ່ກໍານົດໄວ້ໃນ ວັກຍ່ອຍ (e) ມາດຕາ 10.1 (ນິຍາມຄໍາສັບ) ແຕ່ບໍ່ກວມເອົາ ນັກລົງທຶນໃນສະຖາບັນການເງິນ ຫຼື ນັກລົງທຶນໃນການບໍລິການທາງການເງິນ[1]; ຫຼື
(3) ຜູ້ໃຫ້ບໍລິການຂອງປະເທດພາຄີ ຕາມທີ່ກໍານົດໄວ້ໃນ ມາດຕາ 8.1 (ນິຍາມຄໍາສັບ).

**ແຕ່ບໍ່ກວມເອົາ "ສະຖາບັນການເງິນ", "ການຈັດຕັ້ງລັດ" ຫຼື "ຜູ້ໃຫ້ບໍລິການດ້ານການເງິນ** ຕາມທີ່ກໍານົດໄວ້ໃນ ມາດຕາ 1 (ນິຍາມຄໍາສັບ) ຂອງເອກະສານຊ້ອນທ້າຍ 8A (ການບໍລິການດ້ານການເງິນ);

(ຄ) ການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກ (Electronic Authentication) ໝາຍເຖິງ ຂັ້ນຕອນໃນການຢັ້ງຢືນ ຫຼື ທົດສອບ ຄໍາຊີ້ແຈງ ຫຼື ຂໍ້ຮຽກຮ້ອງ ທາງເອເລັກໂຕຣນິກ, ເພື່ອສ້າງລະດັບຄວາມເຊື່ອໝັ້ນຕໍ່ຄວາມໜ້າເຊື່ອຖືຂອງຄໍາຊີ້ແຈງ ຫຼື ຂໍ້ຮຽກຮ້ອງນັ້ນ; ແລະ

(ງ) ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ (Unsolicited Commercial Electronic Message) ໝາຍເຖິງ ຂໍ້ຄວາມເອເລັກໂຕຣນິກທີ່ສົ່ງເພື່ອຈຸດປະສົງທາງການຄ້າ ຫຼື

---

[1] ເພື່ອຄວາມຊັດເຈນຍິ່ງຂຶ້ນ, ນັກລົງທຶນໃນສະຖາບັນການເງິນ ຫຼື ນັກລົງທຶນທີ່ເປັນຜູ້ສະໜອງບໍລິການທາງການເງິນ ອາດຈະເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄຸ້ມຄອງໃນພາກນີ້ ສໍາລັບການລົງທຶນອື່ນທີ່ບໍ່ແມ່ນສະຖາບັນການເງິນ ຫຼື ຜູ້ສະໜອງບໍລິການທາງການເງິນ.

ການຕະຫຼາດ ໄປຍັງທີ່ຢູ່ທາງເອເລັກໂຕຣນິກ ໂດຍປາສະຈາກຄວາມຍິນຍອມຈາກຜູ້ຮັບ ຫຼື ເຖິງແມ່ນວ່າ ຜູ້ຮັບໄດ້ປະຕິເສດຢ່າງຊັດເຈນແລ້ວ[2].

**ມາດຕາ 12.2 ຫຼັກການ ແລະ ຈຸດປະສົງ (Principles and Objectives)**

1. ປະເທດພາຄີ ຮັບຮູ້ເຖິງ ໂອກາດ ແລະ ການຂະຫຍາຍຕົວທາງເສດຖະກິດ ຈາກການຄ້າຜ່ານທາງເອເລັກໂຕຣນິກ, ຄວາມສຳຄັນຂອງຂອບວຽກທີ່ສົ່ງເສີມຄວາມເຊື່ອໝັ້ນຂອງຜູ້ຊົມໃຊ້ຕໍ່ການຄ້າຜ່ານທາງເອເລັກໂຕຣນິກ, ແລະ ຄວາມສຳຄັນຂອງການອຳນວຍຄວາມສະດວກໃນການພັດທະນາ ແລະ ນຳໃຊ້ ການຄ້າຜ່ານທາງເອເລັກໂຕຣນິກ.

2. ຂໍ້ກຳນົດໃນພາກນີ້ ມີຈຸດປະສົງເພື່ອ:

   (ກ) ສົ່ງເສີມການຄ້າຜ່ານທາງເອເລັກໂຕຣນິກຂອງບັນດາປະເທດພາຄີ ແລະ ຂະຫຍາຍການຊົມໃຊ້ການຄ້າຜ່ານທາງເອເລັກໂຕຣນິກໃນທົ່ວໂລກ;
   (ຂ) ປະກອບສ່ວນໃນການສ້າງສະພາບແວດລ້ອມດ້ານຄວາມໝັ້ນໃຈ ແລະ ເຊື່ອໝັ້ນ ໃນການຊົມໃຊ້ການຄ້າຜ່ານທາງເອເລັກໂຕຣນິກ;
   (ຄ) ສົ່ງເສີມການຮ່ວມມືລະຫວ່າງບັນດາປະເທດພາຄີ ໃນວຽກງານການພັດທະນາການຄ້າຜ່ານທາງເອເລັກໂຕຣນິກ.

**ມາດຕາ 12.3 ຂອບເຂດ[3] (Scope)**

1. ຂໍ້ກຳນົດໃນພາກນີ້ ຕ້ອງນຳໃຊ້ກັບບັນດາມາດຕະການທີ່ຖືກຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ຂອງປະເທດພາຄີ ຊຶ່ງສົ່ງຜົນກະທົບຕໍ່ການຄ້າຜ່ານທາງເອເລັກໂຕຣນິກ.
2. ຂໍ້ກຳນົດໃນພາກນີ້ ຕ້ອງບໍ່ນຳໃຊ້ກັບການຈັດຊື້-ຈັດຈ້າງຂອງລັດຖະບານ.
3. ຂໍ້ກຳນົດໃນພາກນີ້ ຕ້ອງບໍ່ນຳໃຊ້ກັບຂໍ້ມູນຂ່າວສານທີ່ມີໄວ້ ຫຼື ຖືກປະມວນ ໂດຍ ຫຼື ໃນນາມປະເທດພາຄີ, ຫຼື ມາດຕະການທີ່ຕິດພັນກັບຂໍ້ມູນຂ່າວສານດັ່ງກ່າວ, ລວມທັງ ມາດຕະກາດທີ່ຕິດພັນກັບການເກັບກຳຂໍ້ມູນຂອງຕົນ.
4. ມາດຕາ 12.14 (ສະຖານທີ່ຕັ້ງຂອງສິ່ງອຳນວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີ) ແລະ

---

[2] ປະເທດພາຄີ ອາດຈະນຳໃຊ້ນິຍາມຄຳສັບດັ່ງກ່າວ ສຳລັບ ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ ທີ່ຖືກນຳສົ່ງ ຜ່ານໜຶ່ງ ຫຼື ຫຼາຍຮູບແບບຂອງການນຳສົ່ງ, ລວມທັງ ບໍລິການຂໍ້ຄວາມສັ້ນ **(SMS)** ຫຼື ອີເມວ **(Email)**. ເຖິງຈະກຳນົດໄວ້ໃນວັກນີ້ ກໍຕາມ, ປະເທດພາຄີ ຄວນພະຍາຍາມຮັບຮອງ ຫຼື ບັງຄັບໃຊ້ມາດຕະການ ໃຫ້ສອດຄ່ອງກັບມາດຕາ 12.9 (ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ) ທີ່ນຳໃຊ້ກັບ ຮູບແບບອື່ນຂອງການນຳສົ່ງ ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ບໍ່ຜູ້ບໍ່ໄດ້ຮ້ອງຂໍ.

[3] ເພື່ອຄວາມຊັດເຈນຍິ່ງຂຶ້ນ, ບັນດາປະເທດພາຄີ ຢືນຢັນວ່າ ບັນດາພັນທະຕ່າງໆໃນພາກນີ້ ຈະບໍ່ສົ່ງຜົນຕໍ່ຈຸດຢືນຂອງແຕ່ລະປະເທດໃນອົງການການຄ້າໂລກ (WTO).

ມາດຕາ 12.15 (ການເຄື່ອນຍ້າຍຂໍ້ມູນຂ້າມແດນຜ່ານຊ່ອງທາງເອເລັກໂຕຣນິກ) ຕ້ອງບໍ່ນຳໃຊ້ກັບຮູບແບບຂອງມາດຕະການຕ່າງໆຂອງປະເທດພາຄີທີ່ບໍ່ສອດຄ່ອງກັບພັນທະສັນຍາໃນພາກທີ VIII (ການຄ້າດ້ານການບໍລິການ) ຫຼື ພາກທີ X (ການລົງທຶນ) ໃນຂອບເຂດທີ່ ມາດຕະການດັ່ງກ່າວ ຖືກຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ ຕາມ:

(ກ) ມາດຕາ 8.8 (ຕາຕະລາງມາດຕະການທີ່ບໍ່ສອດຄ່ອງ - NCM) ຫຼື ມາດຕາ 10.8 (ມາດຕະການສະຫງວນ ແລະ ມາດຕະການທີ່ບໍ່ສອດຄ່ອງ);

(ຂ) ຂໍ້ກຳນົດ, ຂໍ້ຈຳກັດ, ຄຸນສົມບັດ ຫຼື ເງື່ອນໄຂ ທີ່ກຳນົດໃນພັນທະຜູກພັນຂອງປະເທດພາຄີ ຫຼື ຕິດພັນກັບຂະແໜງການທີ່ບໍ່ໄດ້ເປັນພັນທະຜູກພັນຂອງປະເທດພາຄີ, ຊຶ່ງຖືກສ້າງຂຶ້ນຕາມມາດຕາ 8.6 (ການປະຕິບັດແບບຊາດທີ່ໄດ້ຮັບອະນຸເຄາະຍິ່ງ: MFN) ຫຼື ມາດຕາ 8.7 (ຕາຕະລາງພັນທະຜູກພັນສະເພາະ); ຫຼື

(ຄ) ຂໍ້ຍົກເວັ້ນໃດໆ ທີ່ນຳໃຊ້ໄດ້ກັບບັນດາພັນທະສັນຍາໃນພາກທີ VIII (ການຄ້າດ້ານການບໍລິການ) ຫຼື ພາກທີ X (ການລົງທຶນ).

5. ເພື່ອຄວາມຊັດເຈນຍິ່ງຂຶ້ນ, ມາດຕະການທີ່ສົ່ງຜົນຕໍ່ກັບການສະໜອງບໍລິການຜ່ານຊ່ອງທາງເອເລັກໂຕຣນິກ ແມ່ນຂຶ້ນກັບພັນທະສັນຍາທີ່ກຳນົດໄວ້ໃນບົດບັນຍັດທີ່ກ່ຽວຂ້ອງຂອງ:

(ກ) ພາກ VIII (ການຄ້າດ້ານການບໍລິການ); ແລະ

(ຂ) ພາກ X (ການລົງທຶນ), ລວມທັງເອກະສານຊ້ອນທ້າຍ II (ຕາຕະລາງພັນທະຜູກພັນສະເພາະສຳລັບການຄ້າດ້ານການບໍລິການ), ເອກະສານຊ້ອນທ້າຍ III (ຕາຕະລາງ ມາດຕະການສະຫງວນ ແລະ ມາດຕະການທີ່ບໍ່ສອດຄ່ອງ ສຳລັບການຄ້າດ້ານການບໍລິການ ແລະ ການລົງທຶນ) ແລະ ຂໍ້ຍົກເວັ້ນອື່ນທີ່ຍບັງຄັບໃຊ້ກັບບັນດາພັນທະສັນຍາເຫຼົ່ານັ້ນ.

**ມາດຕາ 12.4 ການຮ່ວມມື (Cooperation)**

1. ແຕ່ລະປະເທດພາຄີ ຕ້ອງຮ່ວມມືກັນຕາມຄວາມເໝາະສົມ ໃນການ:

(ກ) ຮ່ວມມືກັນຊ່ວຍເຫຼືອວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການແກ້ໄຂອຸປະສັກຕ່າງໆ ຕໍ່ການນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ;

(ຂ) ລະບຸຂົງເຂດວຽກງານການຮ່ວມມືທີ່ເປັນເປົ້າໝາຍ ລະຫວ່າງປະເທດພາຄີ ທີ່ຈະຊ່ວຍບັນດາປະເທດພາຄີ ໃນການຈັດຕັ້ງປະຕິບັດ ຫຼື ຍົກລະດັບຂອບວຽກທາງນິຕິກຳການຄ້າຜ່ານທາງເອເລັກໂຕຣນິກ, ເປັນຕົ້ນ ກິດຈະກຳການຄົ້ນຄວ້າ-ວິໄຈ ແລະ ການຝຶກອົບຮົມ, ການສ້າງຂີດຄວາມສາມາດ ແລະ ໃຫ້ການຊ່ວຍເຫຼືອດ້ານວິຊາການ;

(ຄ) ແບ່ງປັນຂໍ້ມູນຂ່າວສານ, ປະສົບການ ແລະ ການປະຕິບັດທີ່ດີສຸດ ໃນການຮັບມືກັບບັນຫາທ້າທາຍທີ່ຕິດພັນກັບການພັດທະນາ ແລະ ນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ;

(ງ) ຊຸກຍູ້ສົ່ງເສີມໃຫ້ຂະແໜງທຸລະກິດ ພັດທະນາວິທີການ ຫຼື ການປະຕິບັດ ທີ່ເພີ່ມຄວາມຄວາມຮັບຜິດຊອບ ແລະ ຄວາມໝັ້ນໃຈຂອງຜູ້ຊົມໃຊ້ ເພື່ອສົ່ງເສີມນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ; ແລະ

(ຈ) ປະກອບສ່ວນຢ່າງຕັ້ງໜ້າ ທັງໃນເວທີພາກພື້ນ ແລະ ສາກົນ ເພື່ອສົ່ງເສີມການພັດທະນາວຽກງານການຄ້າຜ່ານທາງເອເລັກໂຕຣນິກ.

2. ບັນດາປະເທດພາຄີ ຕ້ອງພະຍາຍາມດຳເນີນການຮູບແບບຂອງການຮ່ວມມືທີ່ສ້າງຂຶ້ນໃນສັນຍາສະບັບນີ້ ແລະ ບໍ່ຊໍ້າຊ້ອນກັບການລິເລີ່ມດ້ານການຮ່ວມມືທີ່ມີຢູ່ໃນເວທີສາກົນ.

**ໝວດ ຂ**
**ການອຳນວຍຄວາມສະດວກທາງການຄ້າ**

### ມາດຕາ 12.5 ການຄ້າແບບບໍ່ນຳໃຊ້ເຈ້ຍ (Paperless Trading)

1. ແຕ່ລະປະເທດພາຄີ ຕ້ອງ:

   (ກ) ເຮັດວຽກເພື່ອຈັດຕັ້ງປະຕິບັດບັນດາຂໍ້ລິເລີ່ມຕ່າງໆ ທີ່ຈັດໃຫ້ມີການນຳໃຊ້ການຄ້າແບບບໍ່ນຳໃຊ້ເຈ້ຍ ໂດຍໃຫ້ຄວາມສຳຄັນກັບ ວິທີການທີ່ໄດ້ຕົກລົງກັນ ໂດຍອົງການຈັດຕັ້ງສາກົນ ລວມທັງອົງການພາສີໂລກ (World Customs Organization - WCO)[4];
   (ຂ) ພະຍາຍາມຮັບເອົາເອກະສານຄຸ້ມຄອງການນຳເຂົ້າ-ສົ່ງອອກ ທີ່ຖືກສົ່ງມອບຜ່ານທາງເອເລັກໂຕຣນິກ ໂດຍໃຫ້ທຽບເທົ່າກັບເອກະສານຄຸ້ມຄອງການນຳເຂົ້າ-ສົ່ງອອກໃນຮູບແບບເຈ້ຍທົ່ວໄປ; ແລະ
   (ຄ) ພະຍາຍາມໃຫ້ມີ ເອກະສານຄຸ້ມຄອງການນຳເຂົ້າ-ສົ່ງອອກ ໃນຮູບແບບເອເລັກໂຕຣນິກ ໃຫ້ກັບສາທາລະນະທົ່ວໄປ.

2. ບັນດາປະເທດພາຄີ ຕ້ອງຮ່ວມມືກັນໃນເວທີສາກົນ ເພື່ອສົ່ງເສີມໃຫ້ມີການຍອມຮັບເອົາເອກະສານຄຸ້ມຄອງການນຳເຂົ້າ-ສົ່ງອອກໃນຮູບແບບເອເລັກໂຕຣນິກ.

### ມາດຕາ 12.6 ການຢັ້ງຢືນຄວາມຖືກຕ້ອງແທ້ຈິງ ແລະ ລາຍເຊັນເອເລັກໂຕຣນິກ (Electronic Authentication and Signature)

1. ປະເທດພາຄີ ຕ້ອງບໍ່ປະຕິເສດຄວາມຖືກຕ້ອງຕາມກົດໝາຍຂອງລາຍເຊັນ ພຽງເພາະວ່າ ລາຍເຊັນນັ້ນ ຢູ່ໃນຮູບແບບເອເລັກໂຕຣນິກ, ຍົກເວັ້ນໃນກໍລະນີທີ່ກຳນົດໄວ້ເປັນຢ່າງອື່ນພາຍໃຕ້ກົດໝາຍ ແລະ ລະບຽບການຂອງຕົນ[5].

2. ໂດຍໃຫ້ຄວາມສຳຄັນກັບບັນທັດຖານລະຫວ່າງປະເທດສຳລັບການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກ, ແຕ່ລະປະເທດພາຄີ ຕ້ອງ:

---

[4] ກຳປູເຈຍ, ສປປ ລາວ, ມຽນມ້າ ຕ້ອງບໍ່ມີພັນທະສັນຍາ ເພື່ອບັງຄັບໃຊ້ວັກຍ່ອຍນີ້ ເປັນໄລຍະເວລາຫ້າປີ ພາຍຫຼັງວັນທີມີຜົນບັງຄັບໃຊ້ສັນຍາສະບັບນີ້.

[5] ກຳປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະສັນຍາ ເພື່ອບັງຄັບໃຊ້ ວັກນີ້ ເປັນໄລຍະຫ້າ ປີ ພາຍຫຼັງວັນທີມີຜົນບັງຄັບໃຊ້ສັນຍາສະບັບນີ້.

(ກ) ອະນຸຍາດໃຫ້ຜູ້ເຂົ້າຮ່ວມໃນທຸລະກຳທາງເອເລັກໂຕຣນິກ ເລືອກນຳໃຊ້ເຕັກໂນໂລຊີໃນການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກທີ່ເໝາະສົມ ແລະ ຮູບແບບການຈັດຕັ້ງປະຕິບັດ ສຳລັບການດຳເນີນທຸລະກຳທາງເອເລັກໂຕຣນິກຂອງຕົນ;

(ຂ) ບໍ່ຈຳກັດການຮັບຮອງ ເຕັກໂນໂລຊີໃນການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກ ແລະ ຮູບແບບການຈັດຕັ້ງປະຕິບັດ ສຳລັບການດຳເນີນທຸລະກຳທາງເອເລັກໂຕຣນິກ; ແລະ

(ຄ) ອະນຸຍາດໃຫ້ຜູ້ເຂົ້າຮ່ວມໃນທຸລະກຳທາງເອເລັກໂຕຣນິກ ມີໂອກາດພິສູດວ່າການດຳເນີນທຸລະກຳທາງເອເລັກໂຕຣນິກຂອງຕົນ ແມ່ນ ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງຕົນ ສຳລັບການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກ.

3. ເຖິງວ່າຈະໄດ້ກຳນົດໄວ້ໃນວັກທີ 2 ກໍຕາມ, ແຕ່ລະປະເທດພາຄີ ອາດຈະກຳນົດວ່າ ວິທີການຂອງການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກຂອງທຸລະກຳທາງເອເລັກໂຕຣນິກບາງປະເພດສະເພາະນັ້ນຕ້ອງປະຕິບັດຕາມມາດຕະຖານການດຳເນີນງານທີ່ເໝາະສົມ ຫຼື ໄດ້ຮັບການຢັ້ງຢືນໂດຍອົງການຄຸ້ມຄອງໃດໜຶ່ງທີ່ຖືກຮັບຮອງຕາມກົດໝາຍ ແລະ ລະບຽບການຂອງປະເທດພາຄີນັ້ນ.

4. ປະເທດພາຄີ ຕ້ອງສົ່ງເສີມການນຳໃຊ້ການຢັ້ງຢືນຄວາມຖືກຕ້ອງແທ້ຈິງທາງເອເລັກໂຕຣນິກທີ່ສາມາດປະຕິບັດງານຮ່ວມກັນໄດ້.

## ໝວດ ຄ
## ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າຜ່ານທາງເອເລັກໂຕຣນິກ

### ມາດຕາ 12.7 ການປົກປ້ອງຜູ້ຊົມໃຊ້ອອນລາຍ (Online Consumer Protection)

1. ປະເທດພາຄີ ຮັບຮູ້ເຖິງຄວາມສຳຄັນຂອງການຮັບຮອງນຳໃຊ້ ແລະ ບັງຄັບໃຊ້ມາດຕະການການປົກປ້ອງຜູ້ຊົມໃຊ້ທີ່ໂປ່ງໃສ ແລະ ມີປະສິດທິຜົນສຳລັບການຄ້າຜ່ານທາງເອເລັກໂຕຣນິກ ລວມທັງ ມາດຕະການອື່ນທີ່ເອື້ອອຳນວຍໃຫ້ແກ່ການສ້າງຄວາມໝັ້ນໃຈຂອງຜູ້ຊົມໃຊ້.

2. ແຕ່ລະປະເທດພາຄີ ຕ້ອງຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ກົດໝາຍ ແລະ ລະບຽບການ ເພື່ອໃຫ້ມີການປົກປ້ອງຜູ້ຊົມໃຊ້ທີ່ນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ ຕໍ່ກັບພຶດຕິກຳສໍ້ໂກງ ແລະ ຫຼອກລວງ ທີ່ເປັນອັນຕະລາຍ ຫຼື ມີທ່າອ່ຽງສ້າງຄວາມເສຍຫາຍໃຫ້ແກ່ຜູ້ຊົມໃຊ້ນັ້ນ[6].

3. ປະເທດພາຄີ ຮັບຮູ້ເຖິງຄວາມສຳຄັນຂອງການຮ່ວມມື ລະຫວ່າງອົງການຄຸ້ມຄອງວຽກງານປົກປ້ອງຜູ້ຊົມໃຊ້ຂອງບັນດາປະເທດພາຄີ ໃນຂົງເຂດການຄ້າຜ່ານທາງເອເລັກໂຕຣນິກ ເພື່ອຍົກລະດັບວຽກງານປົກປ້ອງຜູ້ຊົມໃຊ້.

4. ປະເທດພາຄີ ຕ້ອງເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການປົກປ້ອງຜູ້ຊົມໃຊ້ ເປັນຕົ້ນແມ່ນການປົກປ້ອງຜູ້

[6] ກຳປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະສັນຍາ ເພື່ອບັງຄັບໃຊ້ ວັກນີ້ ເປັນໄລຍະຫ້າປີ ພາຍຫຼັງວັນທີມີຜົນບັງຄັບໃຊ້ສັນຍາສະບັບນີ້.

ຊົມໃຊ້ການຄ້າຜ່ານທາງເອເລັກໂຕຣນິກ, ລວມທັງ ວິທີການ:

(ກ) ຜູ້ຊົມໃຊ້ ເຂົ້າເຖິງການແກ້ໄຂບັນຫາກ່ຽວກັບການຄ້າຜ່ານທາງເອເລັກໂຕຣນິກ; ແລະ
(ຂ) ຫົວໜ່ວຍທຸລະກິດສາມາດປະຕິບັດຕາມຂໍ້ກຳນົດທາງກົດໝາຍຕ່າງໆໄດ້.

**ມາດຕາ 12.8 ການປົກປ້ອງຂໍ້ມູນສ່ວນບຸກຄົນອອນລາຍ (Online Personal Information Protection)**

1. ປະເທດພາຄີ ຕ້ອງຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ ຂອບວຽກດ້ານນິຕິກຳທີ່ຮັບປະກັນການປົກປ້ອງຂໍ້ມູນສ່ວນບຸກຄົນຂອງຜູ້ຊົມໃຊ້ການຄ້າຜ່ານທາງເອເລັກໂຕຣນິກ[7,8].

2. ໃນການພັດທະນາຂອບວຽກດ້ານນິຕິກຳຂອງຕົນ ສຳລັບວຽກງານການປົກປ້ອງຂໍ້ມູນສ່ວນບຸກຄົນ, ແຕ່ລະປະເທດພາຄີ ຕ້ອງໃຫ້ຄວາມສຳຄັນກັບມາດຕະຖານສາກົນ, ຫຼັກການ, ຂໍ້ແນະນຳ ແລະ ເງື່ອນໄຂ ຂອງອົງການຈັດຕັ້ງສາກົນ ຫຼື ໜ່ວຍງານສາກົນທີ່ກ່ຽວຂ້ອງ.

3. ແຕ່ລະປະເທດພາຄີ ຕ້ອງເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການປົກປ້ອງຂໍ້ມູນສ່ວນບຸກຄົນທີ່ຕົນມີ ໃຫ້ແກ່ຜູ້ຊົມໃຊ້ການຄ້າຜ່ານທາງເອເລັກໂຕຣນິກ, ລວມທັງ ວິທີການ:

   (ກ) ຜູ້ຊົມໃຊ້ ເຂົ້າເຖິງການແກ້ໄຂບັນຫາກ່ຽວກັບການຄ້າຜ່ານທາງເອເລັກໂຕຣນິກ; ແລະ
   (ຂ) ຫົວໜ່ວຍທຸລະກິດສາມາດປະຕິບັດຕາມຂໍ້ກຳນົດທາງກົດໝາຍຕ່າງໆໄດ້.

4. ປະເທດພາຄີ ຕ້ອງສົ່ງເສີມບັນດານິຕິບຸກຄົນ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ນະໂຍບາຍ ແລະ ຂັ້ນຕອນການປົກປ້ອງຂໍ້ມູນສ່ວນບຸກຄົນຂອງຕົນ ຜ່ານຊ່ອງທາງຕ່າງໆ ລວມທັງ ຜ່ານຊ່ອງທາງອິນເຕີເນັດ.

5. ປະເທດພາຄີ ຕ້ອງຮ່ວມມືໃນຂອບເຂດທີ່ເປັນໄປໄດ້ໃນການປົກປ້ອງຂໍ້ມູນສ່ວນບຸກຄົນທີ່ຖືກໂອນຖ່າຍຂ້າມແດນມາຈາກປະເທດພາຄີອື່ນ.

**ມາດຕາ 12.9 ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ (Unsolicited Commercial Electronic Message)**

---

[7] ກຳປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະສັນຍາ ເພື່ອບັງຄັບໃຊ້ ວັກນີ້ ເປັນໄລຍະຫ້າປີ ພາຍຫຼັງວັນທີມີຜົນບັງຄັບໃຊ້ສັນຍາສະບັບນີ້.

[8] ເພື່ອຄວາມຊັດເຈນຍິ່ງຂຶ້ນ, ປະເທດພາຄີ ອາດຈະປະຕິບັດໃຫ້ສອດຄ່ອງຕາມພັນທະສັນຍາພາຍໃຕ້ວັກນີ້ ໂດຍການຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ ມາດຕະການຕ່າງໆ ເຊັ່ນ ກົດໝາຍ ແລະ ລະບຽບການກ່ຽວກັບ ການປົກປ້ອງຂໍ້ມູນຄວາມເປັນສ່ວນຕົວທີ່ຮັດກຸມ, ການປົກປ້ອງຂໍ້ມູນສ່ວນບຸກຄົນ; ກົດໝາຍ ແລະ ລະບຽບການສະເພາະຂະແໜງການທີ່ກວມເອົາການປົກປ້ອງຂໍ້ມູນສ່ວນບຸກຄົນ, ຫຼື ກົດໝາຍ ແລະ ລະບຽບການ ທີ່ໃຫ້ມີການບັງຄັບໃຊ້ພັນທະຜູກພັນໃນສັນຍາຂອງນິຕິບຸກຄົນທີ່ຕິດພັນກັບການປົກປ້ອງຂໍ້ມູນສ່ວນບຸກຄົນ.

1. ປະເທດພາຄີ ຕ້ອງຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ ມາດຕະການຕ່າງໆກ່ຽວກັບ ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ ດັ່ງນີ້:

   (ກ) ກຳນົດໃຫ້ຜູ້ສົ່ງຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຮັບ ໃນການຢຸດຮັບຂໍ້ຄວາມດັ່ງກ່າວອີກ; ຫຼື

   (ຂ) ກຳນົດໃຫ້ມີການຍິນຍອມ ຈາກຜູ້ຮັບຂໍ້ຄວາມ ເພື່ອຮັບເອົາຂໍ້ຄວາມທາງເອເລັກໂຕຣນິກທາງການຄ້າ, ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງຕົນ; ຫຼື

   (ຄ) ກຳນົດໃຫ້ມີການຫຼຸດປະລິມານ ຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ.

2. ແຕ່ລະປະເທດພາຄີ ຕ້ອງມີມາດຕະການຕໍ່ກັບຜູ້ສົ່ງຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ ທີ່ບໍ່ປະຕິບັດຕາມມາດຕະການຕາມພັນທະໃນວັກ 1[9].

3. ປະເທດພາຄີ ຕ້ອງພະຍາຍາມຮ່ວມມື ໃນກໍລະນີມີບັນຫາຮ່ວມກັນຢ່າງເໝາະສົມ ກ່ຽວກັບການຄຸ້ມຄອງຂໍ້ຄວາມເອເລັກໂຕຣນິກທາງການຄ້າທີ່ຜູ້ຮັບບໍ່ໄດ້ຮ້ອງຂໍ.

### ມາດຕາ 12.10 ຂອບວຽກດ້ານນິຕິກຳພາຍໃນ (Domestic Regulatory Framework)

1. ປະເທດພາຄີ ຕ້ອງຮັບຮອງນຳໃຊ້ ຫຼື ບັງຄັບໃຊ້ ຂອບວຽກດ້ານນິຕິກຳທີ່ຄຸ້ມຄອງທຸລະກຳທາງເອເລັກໂຕຣນິກ ໂດຍຄຳນຶງເຖິງ ແມ່ແບບກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ ສະບັບປີ 1996 ຂອງອົງການ UNCITRAL ຫຼື ສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍ ການນຳໃຊ້ການສື່ສານທາງເອເລັກໂຕຣນິກໃນສັນຍາສາກົນ ສະບັບວັນທີ 23 ພະຈິກ 2005, ທີ່ນິວຢອກ, ຫຼື ແມ່ແບບກົດໝາຍ ແລະ ສົນທິສັນຍາສາກົນອື່ນ ກ່ຽວກັບການຄ້າຜ່ານທາງເອເລັກໂຕຣນິກທີ່ບັງຄັບໃຊ້[10].

2. ປະເທດພາຄີ ຕ້ອງພະຍາຍາມ ຫຼີກເວັ້ນ ການສ້າງອຸປະສັກໃນການຄຸ້ມຄອງທີ່ບໍ່ຈຳເປັນ ຕໍ່ກັບການດຳເນີນທຸລະກຳທາງເອເລັກໂຕຣນິກ.

### ມາດຕາ 12.11 ພັນທະພາສີ (Custom Duties)

1. ແຕ່ລະປະເທດພາຄີ ຕ້ອງຮັກສາໄວ້ການປະຕິບັດໃນປັດຈຸບັນຂອງຕົນ ສຳລັບການບໍ່ເກັບພັນທະພາສີ ຕໍ່ກັບ

---

[9] ກຳປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກນີ້ ໃນໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້. ບຣູໄນ ດາຣູຊາລາມ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດວັກນີ້ ໃນໄລຍະ 3 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້

[10] ກຳປູເຈຍ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກນີ້ ໃນໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້.

ການສົ່ງຂໍ້ມູນເອເລັກໂຕຣນິກ (Electronic Transition) ຂ້າມແດນລະຫວ່າງປະເທດພາຄີ.

2. ການປະຕິບັດທີ່ກຳນົດໄວ້ໃນວັກ 1 ແມ່ນ ສອດຄ່ອງກັບມະຕິກອງປະຊຸມລັດຖະມົນຕີອົງການການຄ້າໂລກ ຄັ້ງວັນທີ 13 ທັນວາ 2017 ກ່ຽວກັບແຜນວຽກດ້ານການຄ້າຜ່ານທາງເອເລັກໂຕຣນິກ (WT/MIN(17)/65).

3. ແຕ່ລະປະເທດພາຄີ ອາດຈະດັດສົມການປະຕິບັດຂອງຕົນທີ່ອ້າງອີງເຖິງໃນວັກ 1 ໂດຍອີງຕາມຜົນຂອງມະຕິກອງປະຊຸມລັດຖະມົນຕີອົງການການຄ້າໂລກ ວ່າດ້ວຍ ພັນທະພາສີຕໍ່ກັບການສົ່ງຂໍ້ມູນເອເລັກໂຕຣນິກ ພາຍໃນແຜນວຽກດ້ານການຄ້າຜ່ານທາງເອເລັກໂຕຣນິກ ຄັ້ງຕໍ່ໄປ.

4. ປະເທດພາຄີ ຕ້ອງທົບທວນຄືນມາດຕານີ້ ໂດຍສອດຄ່ອງກັບ ມະຕິກອງປະຊຸມລັດຖະມົນຕີອົງການການຄ້າໂລກ ທີ່ຕິດພັນກັບແຜນວຽກດ້ານການຄ້າຜ່ານທາງເອເລັກໂຕຣນິກ ຄັ້ງຕໍ່ໄປ.

5. ເພື່ອຄວາມຊັດເຈນຍິ່ງຂຶ້ນ, ວັກ 1 ຕ້ອງບໍ່ເປັນການຫ້າມປະເທດພາຄີ ໃນການເກັບອາກອນ, ຄ່າທຳນຽມ, ຫຼື ຄ່າບໍລິການອື່ນໆ ສຳລັບການສົ່ງຂໍ້ມູນເອເລັກໂຕຣນິກ ໂດຍມີເງື່ອນໄຂວ່າ ອາກອນ, ຄ່າທຳນຽມ ຫຼື ຄ່າບໍລິການຕ່າງໆ ທີ່ເກັບນັ້ນ ແມ່ນສອດຄ່ອງກັບສັນຍາສະບັບນີ້.

**ມາດຕາ 12.2 ຄວາມໂປ່ງໃສ (Transparency)**

1. ແຕ່ລະປະເທດພາຄີ ຕ້ອງເຜີຍແຜ່ທຸກມາດຕະການທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດທົ່ວໄປ ຊຶ່ງກ່ຽວຂ້ອງ ຫຼື ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດບັນດາຂໍ້ກຳນົດໃນພາກນີ້ ໃຫ້ໄວເທົ່າທີ່ຈະເປັນໄປໄດ້ ຫຼື ໃນກໍລະນີທີ່ບໍ່ສາມາດປະຕິບັດໄດ້ ໃຫ້ເຜີຍແຜ່ຕໍ່ສາທາລະນະດ້ວຍວິທີອື່ນ ລວມເຖິງ ທາງອິນເຕີເນັດຖ້າຫາກເປັນໄປໄດ້.

2. ປະເທດພາຄີ ຕ້ອງຕອບສະໜອງໃຫ້ໄວທີ່ສຸດເທົ່າເປັນໄປໄດ້ ຕໍ່ຄຳຮ້ອງຂໍທີ່ກ່ຽວຂ້ອງຈາກປະເທດພາຄີອື່ນ ສຳລັບ ຂໍ້ມູນສະເພາະ ກ່ຽວກັບມາດຕະການຂອງຕົນທີ່ການຈັດຕັ້ງປະຕິບັດທົ່ວໄປ ຊຶ່ງກ່ຽວຂ້ອງ ຫຼື ສົ່ງຜົນກະທົບ ຕໍ່ການຈັດຕັ້ງປະຕິບັດບັນດາຂໍ້ກຳນົດໃນພາກນີ້.

**ມາດຕາ 12.13 ຄວາມປອດໄພທາງໄຊເບີ (Cyber Security)**

ປະເທດພາຄີ ຮັບຮູ້ເຖິງຄວາມສຳຄັນຂອງ:

(ກ) ການສ້າງຂີດຄວາມສາມາດໃຫ້ແກ່ບັນດາອົງການຄຸ້ມຄອງທີ່ກ່ຽວຂ້ອງ ທີ່ຮັບຜິດຊອບ ສຳລັບຕອບໂຕ້ກັບເຫດການຄວາມປອດໄພທາງໄຊເບີທາງຄອມພິວເຕີ, ລວມທັງ ຜ່ານ ການແລກປ່ຽນບົດຮຽນການປະຕິບັດທີ່ດີສຸດ; ແລະ

(ຂ) ນໍາໃຊ້ກົນໄກການຮ່ວມມືທີ່ມີຢູ່ ເພື່ອຮ່ວມມືໃນຂົງເຂດວຽກງານທີ່ກ່ຽວຂ້ອງກັບຄວາມປອດໄພ ທາງ ໄຊເບີ.

**ໝວດ ງ**

**ການສົ່ງເສີມການຄ້າຜ່ານທາງເອເລັກໂຕຣນິກຂ້າມແດນ**

**ມາດຕາ 12.14 ສະຖານທີ່ຕັ້ງຂອງສິ່ງອໍານວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີ (Location of Computing Facilities)**

1. ປະເທດພາຄີ ຮັບຮູ້ວ່າແຕ່ລະປະເທດພາຄີ ອາດຈະມີມາດຕະການຂອງຕົນເອງກ່ຽວກັບການນໍາໃຊ້ ຫຼື ສະຖານທີ່ຕັ້ງຂອງສິ່ງອໍານວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີ, ລວມທັງ ຂໍ້ກໍານົດທີ່ແນໃສ່ ເພື່ອຮັບປະກັນຄວາມປອດໄພ ແລະ ການຮັກສາຄວາມລັບຂອງການສື່ສານ.

2. ຫ້າມປະເທດພາຄີ ກໍານົດໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄຸ້ມຄອງໃນພາກນີ້ ເພື່ອນໍາໃຊ້ ຫຼື ມີ ສະຖານທີ່ຕັ້ງຂອງສິ່ງອໍານວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີ ພາຍໃນອານາເຂດຂອງ ປະເທດພາຄີນັ້ນ ເພື່ອເປັນເງື່ອນໄຂໃນການດໍາເນີນທຸລະກິດໃນອານາເຂດຂອງປະເທດພາຄີດັ່ງກ່າວ[11].

3. ບໍ່ມີຂໍ້ກໍານົດໃດໃນມາດຕານີ້ ຫ້າມປະເທດພາຄີ ຮັບຮອງນໍາໃຊ້ ຫຼື ບັງຄັບໃຊ້:

   (ກ) ມາດຕະການທີ່ບໍ່ສອດຄ່ອງກັບວັກ 2 ທີ່ຕົນເຫັນວ່າ ຈໍາເປັນໃນການບັນລຸວັດຖຸປະສົງທາງດ້ານ ນະໂຍບາຍຂອງສາທາລະນະທີ່ຊອບທໍາ[12], ໂດຍມີເງື່ອນໄຂວ່າ ມາດຕະການນັ້ນ ຈະຕ້ອງບໍ່ຖືກນໍາ ໃຊ້ໃນລັກສະນະ ທີ່ຈະກໍ່ໃຫ້ເກີດການຈໍາແນກປະຕິບັດຕາມອໍາເພີໃຈ ຫຼື ຢ່າງບໍ່ສົມເຫດສົມ ຫຼື ເປັນຂໍ້ຈໍາກັດທາງການຄ້າທາງອ້ອມ; ຫຼື

   (ຂ) ມາດຕະການໃດໆ ທີ່ຕົນເຫັນວ່າຈໍາເປັນຕໍ່ກັບການປົກປ້ອງຜົນປະໂຫຍດດ້ານຄວາມປອດໄພທີ່ ສໍາຄັນ. ມາດຕະການດັ່ງກ່າວ ຈະບໍ່ຖືກຮ້ອງຟ້ອງເພື່ອແກ້ໄຂຂໍ້ຂັດແຍ້ງໂດຍປະເທດພາຄີອື່ນ.

**ມາດຕາ 12.15 ການເຄື່ອນຍ້າຍຂໍ້ມູນຂ້າມແດນຜ່ານຊ່ອງທາງເອເລັກໂຕຣນິກ (Cross-Border Transfer of Information by Electronic Means)**

1. ປະເທດພາຄີ ຮັບຮູ້ວ່າແຕ່ລະປະເທດພາຄີ ອາດຈະມີຂໍ້ກໍານົດກ່ຽວກັບການຄຸ້ມຄອງຂອງຕົນ ທີ່ກ່ຽວຂ້ອງ ກັບການເຄື່ອນຍ້າຍຂໍ້ມູນຂ້າມແດນຜ່ານຊ່ອງທາງເອເລັກໂຕຣນິກ.

---

[11] ກໍາປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກນີ້ ໃນໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນ ບັງຄັບໃຊ້, ໃນກໍລະນີຈໍາເປັນ ອາດຈະຕ້ອງຂະຫຍາຍໄປອີກ 3 ປີ. ຫວຽດນາມ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກນີ້ ໃນ ໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້.

[12] ສໍາລັບຈຸດປະສົງທີ 3 (a), ປະເທດພາຄີຢັ້ງຢືນວ່າຄວາມຈໍາເປັນໃນການຈັດຕັ້ງປະຕິບັດ ດ້ານເຫດຜົນຢ່າງຊອບທໍາດ້ານ ນະໂຍບາຍ ປະເທດພາຄີທີ່ຈັດຕັ້ງປະຕິບັດຕ້ອງເປັນຜູ້ພິຈາລະນາ.

2. ປະເທດພາຄີ ຕ້ອງບໍ່ກີດຂວາງການເຄື່ອນຍ້າຍຂໍ້ມູນຂ້າມແດນຜ່ານຊ່ອງທາງເອເລັກໂຕຣນິກ ໃນກໍລະນີ ທີ່ກິດຈະກຳດັ່ງກ່າວ ແມ່ນເພື່ອດຳເນີນທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄຸ້ມຄອງໃນພາກນີ້.[13]

3. ບໍ່ມີຂໍ້ກຳນົດໃດ ໃນມາດຕານີ້ຫ້າມປະເທດພາຄີ ຮັບຮອງນຳໃຊ້ ຫຼື ບັງຄັບໃຊ້:

   (ກ) ມາດຕະການທີ່ບໍ່ສອດຄ່ອງກັບວັກ 2 ທີ່ຕົນເຫັນວ່າ ຈຳເປັນໃນການບັນລຸວັດຖຸປະສົງທາງດ້ານນະໂຍບາຍຂອງສາທາລະນະທີ່ຊອບທຳ[14], ໂດຍມີເງື່ອນໄຂວ່າ ມາດຕະການນັ້ນ ຈະຕ້ອງບໍ່ຖືກນຳໃຊ້ໃນລັກສະນະ ທີ່ຈະກໍ່ໃຫ້ເກີດການຈຳແນກປະຕິບັດຕາມອຳເພີໃຈ ຫຼື ຢ່າງບໍ່ສົມເຫດສົມ ຫຼື ເປັນຂໍ້ຈຳກັດທາງການຄ້າທາງອ້ອມ; ຫຼື

   (ຂ) ມາດຕະການໃດໆ ທີ່ຕົນເຫັນວ່າຈຳເປັນຕໍ່ກັບການປົກປ້ອງຜົນປະໂຫຍດດ້ານຄວາມປອດໄພທີ່ສຳຄັນ. ມາດຕະການດັ່ງກ່າວ ຈະບໍ່ຖືກຮ້ອງຟ້ອງເພື່ອແກ້ໄຂຂໍ້ຂັດແຍ້ງໂດຍປະເທດພາຄີອື່ນ.

## ໝວດ ຈ
## ບົດບັນຍັດອື່ນໆ

### ມາດຕາ 12.16 ການເຈລະຈາປຶກສາຫາລືກ່ຽວກັບການຄ້າຜ່ານທາງເອເລັກໂຕຣນິກ (Dialogue on Electronic Commerce)

1. ປະເທດພາຄີ ຮັບຮູ້ເຖິງຄຸນຄ່າຂອງການເຈລະຈາປຶກສາຫາລື, ລວມທັງ ການປຶກສາຫາລືກັບຜູ້ມີສ່ວນຮ່ວມໃນກໍລະນີທີ່ເໝາະສົມ ເພື່ອສົ່ງເສີມການພັດທະນາ ແລະ ການນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ. ໃນການເຈລະຈາປຶກສາຫາລືດັ່ງກ່າວ ຕ້ອງພິຈາລະນາບັນຫາຕໍ່ໄປນີ້:

   (ກ) ການຮ່ວມມືອີງຕາມມາດຕາ 12.4 (ການຮ່ວມມື);
   (ຂ) ບັນຫາໃນປັດຈຸບັນ ແລະ ບັນຫາທີ່ພວມເກີດຂຶ້ນ ເຊັ່ນ ການປະຕິບັດຕໍ່ສິນຄ້າດິຈິຕອນ, ລະຫັດໂປຣແກຣມ (Source Code), ການເຄື່ອນຍ້າຍຂໍ້ມູນຂ້າມແດນຜ່ານຊ່ອງທາງເອເລັກໂຕຣນິກ ແລະ ສະຖານທີ່ຕັ້ງຂອງສິ່ງອຳນວຍຄວາມສະດວກເພື່ອປະມວນຜົນທາງຄອມພິວເຕີໃນຂະແໜງບໍລິການທາງການເງິນ; ແລະ

---

[13] ກຳປູເຈຍ, ສປປ ລາວ, ມຽນມ້າ ບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກ 2 ໃນໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້, ໃນກໍລະນີຈຳເປັນ ອາດຈະຕ້ອງຂະຫຍາຍໄປອີກ 3 ປີ. ຫວຽດນາມບໍ່ມີພັນທະຕ້ອງຈັດຕັ້ງປະຕິບັດ ວັກ 2 ໃນໄລຍະ 5 ປີ ຫຼັງຈາກສັນຍາສະບັບນີ້ ມີຜົນບັງຄັບໃຊ້.

[14] ເພື່ອຈຸດປະສົງຂອງວັກຍ່ອຍນີ້, ບັນດາປະເທດພາຄີ ຢືນຢັນວ່າ ຄວາມຈຳເປັນທີ່ຢູ່ເບື້ອງຫຼັງການດຳເນີນການຕາມນະໂຍບາຍສາທາລະນະທີ່ຊອບທຳ ຕ້ອງໄດ້ຮັບການຕັດສິນໃຈ ໂດຍປະເທດພາຄີທີ່ຈັດຕັ້ງປະຕິບັດນັ້ນ.

(ຄ) ບັນຫາອື່ນທີ່ກ່ຽວຂ້ອງກັບການພັດທະນາ ແລະ ການນຳໃຊ້ການຄ້າຜ່ານທາງເອເລັກໂຕຣນິກ, ເຊັ່ນ ພຶດຕິກຳຕ້ານການແຂ່ງຂັນ, ການແກ້ໄຂຂໍ້ຂັດແຍ້ງທາງອອນລາຍ, ແລະ ການສົ່ງເສີມທັກສະຄວາມຮູ້ທີ່ກ່ຽວຂ້ອງກັບການຄ້າຜ່ານທາງເອເລັກໂຕຣນິກ, ລວມທັງ ສຳລັບ ການເຄື່ອນຍ້າຍຂ້າມແດນຊົ່ວຄາວຂອງຊ່ຽວຊານ.

2. ການເຈລະຈາປຶກສາຫາລື ຕ້ອງປະຕິບັດໂດຍສອດຄ່ອງກັບ ວັກຍ່ອຍ 1(j) ຂອງມາດຕາ 18.3 (ພາລະບົດບາດຂອງຄະນະກຳມະການຮ່ວມສັນຍາຄູ່ຮ່ວມມືເສດຖະກິດຮອບດ້ານລະດັບພາກພື້ນ (RCEP Joint Committee).

3. ປະເທດພາຄີ ຕ້ອງນຳເອົາບັນຫາທີ່ລະບຸໄວ້ໃນ ວັກ 1 ແລະ ຂໍ້ແນະນຳທີ່ເກີດຂຶ້ນຈາກການເຈລະຈາປຶກສາຫາລື ທີ່ດຳເນີນການອີງຕາມມາດຕານີ້, ໂດຍໃຫ້ຄວາມສຳຄັນໃນບໍລິບົດຂອງ ການທົບທວນທົ່ວໄປຂອງສັນຍາສະບັບນີ້ ຊຶ່ງດຳເນີນການອີງຕາມມາດຕາ 20.8 (ການທົບທວນທົ່ວໄປ).

## ມາດຕາ 12.17 ການແກ້ໄຂຂໍ້ຂັດແຍ້ງ (Settlement of Disputes)

1. ໃນກໍລະນີທີ່ເກີດມີຂໍ້ແຕກຕ່າງລະຫວ່າງປະເທດພາຄີ ກ່ຽວກັບການຕີຄວາມໝາຍ ແລະ ການບັງຄັບໃຊ້ບັນດາຂໍ້ກຳນົດໃນພາກນີ້, ໃນເບື້ອງຕົ້ນ ປະເທດພາຄີ ຕ້ອງໄດ້ປຶກສາຫາລືດ້ວຍຄວາມບໍລິສຸດໃຈ ແລະ ແລະ ພະຍາຍາມທຸກວິທີທາງ ເພື່ອບັນລຸຂໍ້ຕົກລົງທີ່ທັງສອງຝ່າຍພໍໃຈ.

2. ໃນກໍລະນີທີ່ການປຶກສາຫາລືທີ່ອ້າງອີງເຖິງໃນ ວັກ 1 ບໍ່ສາມາດແກ້ໄຂຂໍ້ແຕກຕ່າງໄດ້, ປະເທດພາຄີໃດໜຶ່ງທີ່ເຂົ້າຮ່ວມໃນການປຶກສາຫາລື ອາດຈະນຳບັນຫາດັ່ງກ່າວ ໄປຍັງ ຄະນະກຳມະການຮ່ວມສັນຍາຄູ່ຮ່ວມມືເສດຖະກິດຮອບດ້ານລະດັບພາກພື້ນ (RCEP Joint Committee ) ຕາມມາດຕາ 18.3 (ພາລະບົດບາດຂອງຄະນະກຳມະການຮ່ວມ RCEP).

3. ປະເທດພາຄີ ບໍ່ສາມາດນຳໃຊ້ ກົນໄກການແກ້ໄຂຂໍ້ຂັດແຍ້ງໃນພາກທີ XIX (ການແກ້ໄຂຂໍ້ຂັດແຍ້ງ) ສຳລັບບັນຫາທີ່ເກີດຂຶ້ນພາຍໃຕ້ພາກນີ້.

   ໃນຖານະເປັນສ່ວນໜຶ່ງຂອງການທົບທວນທົ່ວໄປຂອງສັນຍາສະບັບນີ້ ອີງຕາມມາດຕາ 20.8 (ການທົບທວນທົ່ວໄປ), ປະເທດພາຄີ ຕ້ອງທົບທວນການບັງຄັບໃຊ້ຂອງພາກທີ XIX (ການແກ້ໄຂຂໍ້ຂັດແຍ້ງ) ສຳລັບພາກນີ້. ພາຍຫຼັງສຳເລັດການທົບທວນແລ້ວ, ພາກທີ XIX (ການແກ້ໄຂຂໍ້ຂັດແຍ້ງ) ຕ້ອງມີຜົນບັງຄັບໃຊ້ກັບພາກນີ້ໄດ້ ລະຫວ່າງບັນຫາປະເທດພາຄີທີ່ໄດ້ຕົກລົງນຳໃຊ້.